EMPOWERING JOURNALISTS TO REPORT ON GREEN ISSUES THROUGH GAMCIL TRAINING

Mr. Sengathit Chittabouppha is a journalist from Viengsa Village in Xai District, Oudomxai Province. He works at the Oudomxai Provincial Radio and Television Station and is a proud father of two sons, aged 8 and 4. Sengathit's journey in journalism has been marked by a deep commitment to improving his skills and understanding of important issues facing his community.

In October-November 2024, Sengathit had the opportunity to participate in the "Reporting Green Issues" training workshop organized by the Green Action through Media, Mass Organization, and Civil Society in Laos (GAMCIL) Project, funded by the European Union. This workshop brought together journalists from across Laos, from the north, central, and south regions, to build their capacity in environmental journalism and reporting on green issues.

Before attending the GAMCIL training, Sengathit had already participated in various other media training programs, including those organized by the Lao Journalists' Association and the Lao Youth Media Program. While these experiences were valuable, Sengathit found the GAMCIL workshop particularly impactful. He recalled, "Before the training, I mostly wrote simple news articles and handed them off to senior colleagues for editing. Now, I'm much more involved in the process. I've been given the responsibility to manage a page and help my colleagues refine their writing."

During the five-day training, Sengathit learned a range of essential skills, including how to distinguish between true and fake news, how to analyze information for trustworthiness, and how to present environmental issues in an engaging and insightful way. "The lessons on information analysis, understanding how weather patterns affect the environment, and evaluating both short-term and long-term impacts of environmental changes were eye-opening," he shared.

Sengathit, who had never directly written about environmental issues before, now feels empowered to approach environmental journalism with a new perspective. He acknowledged, “Previously, I mostly wrote about conservation efforts, but I focused mainly on the positive impacts. Now, I have the confidence to report on the negative impacts of human actions on the environment, especially the direct effects of climate change.”

One of Sengathit’s key takeaways from the training was how to create news structures that would not only attract attention but also communicate crucial information. He now plans to use these new skills to advocate for environmental protection by educating his community, particularly agriculturists. “I want to reach out to farmers, especially those who still clear forests for farming. I hope they understand the long-term consequences, such as drought, and change their practices. We need to offer them alternative, more sustainable ways of earning a living.”

Sengathit’s vision for the future is clear: to continue using his media platform to promote environmental awareness and encourage sustainable practices. He believes that by sharing what he has learned, he can help shift attitudes and make a tangible impact in his community.

Reflecting on the training, Sengathit expressed his gratitude: “I’m thankful for the opportunity to participate in this workshop. It has opened my eyes to new ways of reporting on environmental issues, and I’m excited to apply these skills in my work. I will continue to develop my skills and use them to improve my media work for the betterment of society.”

The GAMCIL Project has not only equipped Sengathit with practical tools for environmental journalism, but it has also inspired him to become a catalyst for change in his community. Through his work, Sengathit is helping to shape a more sustainable future for Laos.

ໂຄງການ ແກມຊ໊ວ ຈັດຝຶກອົບຮົມສ້າງຄວາມເຂັ້ມແຂງໃຫ້ນັກຂ່າວ ໃນການລາຍງານຂ່າວບັນຫາສິ່ງແວດລ້ອມ

ທ່ານ ແສງອາທິດ ຈິດຕະບຸບຜາ ພະນັກງານນັກຂ່າວວິທະຍຸໂທລະພາບ ປະຈຳຢູ່ສະຖານີວິທະຍຸໂທລະພາບ ແຂວງອຸດົມໄຊ. ປັດຈຸບັນຢູ່ບ້ານວຽງສາ, ເມືອງໄຊ, ແຂວງອຸດົມໄຊ, ແຕ່ງງານແລ້ວ ແລະ ມີລູກ 2 ຄົນ ເປັນຊາຍຫົງ 2, ລູກກົກອາຍຸ 8 ປີ ແລະ ລູກຜູ້ທີ2 ອາຍຸ 4 ປີ. ທ່ານ ແສງອາທິດ ເປັນຄົນຫ້າວຫັນໃນການພັດທະນາເຕັກນິກການລາຍງານຂ່າວຂອງຕົນເອງ ແລະ ດຸໝັ່ນສະແຫວງຫາຂໍ້ມູນຄວາມຮູ້ກ່ຽວກັບບັນຫາສິ່ງແວດລ້ອມ ທີ່ເກີດຂຶ້ນໃນເຂດບ້ານຂອງຕົນ.

ໃນເດືອນ ຕຸລາ ຫາ ພະຈິກ ປີ 2024, ທ່ານ ແສງອາທິດ ໄດ້ມີໂອກາດເຂົ້າຮ່ວມການຝຶກອົບຮົມ ໃນຫົວຂໍ້ “ການລາຍງານຂ່າວບັນຫາສິ່ງແວດລ້ອມ” ໃຫ້ແກ່ນັກຂ່າວ ເຊິ່ງຈັດຂຶ້ນໂດຍ ໂຄງການ ສ້າງຄວາມເຂັ້ມແຂງໃຫ້ແກ່ສື່ມວນຊົນ ໂດຍການສະໜັບສະໜູນທຶນຈາກ ສະຫະພາບ ເອີຣົບ ໂດຍການມີສ່ວນຮ່ວມຂອງອົງການຈັດຕັ້ງມະຫາຊົນ ແລະ ອົງການຈັດຕັ້ງທາງສັງຄົມ ເພື່ອການພັດທະນາສິ່ງແວດລ້ອມ ໃນ ສປປ ລາວ (GAMCIL). ການຝຶກອົບຮົມຄັ້ງນີ້ມີຕົວແທນນັກຂ່າວຈາກຫຼາຍແຂວງທົ່ວປະເທດ ຄື ພາກເໜືອ, ພາກກາງ ແລະ ພາກໃຕ້ ເຂົ້າຮ່ວມ ແລະ ຮຽນຮູ້ແລກປ່ຽນເຕັກນິກການລາຍງານຂ່າວກ່ຽວກັບບັນຫາສິ່ງແວດລ້ອມ ແລະ ການລາຍງານຂ່າວບັນຫາສິ່ງແວດລ້ອມ.

ກ່ອນເຂົ້າຝຶກອົບຮົມນຳ ໂຄງການ GAMCIL ໃນຄັ້ງນີ້, ຜ່ານມາ ທ່ານ ແສງອາທິດ ກໍ່ເຄີຍໄດ້ເຂົ້າຮ່ວມຫຼັກສູດຝຶກອົບຮົມຫຼາຍຄັ້ງແລ້ວເຊິ່ງລວມທັງການຝຶກອົບຮົມສື່ມວນຊົນລາວຈັດຂຶ້ນໂດຍສະມາຄົມນັກຂ່າວລາວ ແລະ ການຝຶກອົບຮົມຂອງລາຍການສື່ໄວໜຸ່ມ. ທ່ານ ແສງອາທິດ ໄດ້ຮຽນຮູ້ບົດຮຽນຫຼາຍຢ່າງ ຈາກການເຂົ້າຮ່ວມຫຼັກສູດຝຶກອົບຮົມທີ່ຜ່ານມາ ເຖິງຢ່າງໃດກໍ່ຕາມການເຂົ້າຮ່ວມຝຶກອົບຮົມນຳ ໂຄງການ GAMCIL ໃນຄັ້ງນີ້ໄດ້ມີຄວາມພິເສດສຳລັບລາວຫຼາຍກ່ວາຄັ້ງອື່ນ.
ທ່ານ ແສງອາທິດ ໄດ້ກ່າວວ່າ “ກ່ອນເຂົ້າຮ່ວມການຝຶກອົບຮົມຄັ້ງນີ້ ຂ້າພະເຈົ້າກໍ່ບໍ່ໄດ້ເຮັດໜ້າທີ່ຫຍັງຫຼາຍ ມີແຕ່ຂຽນບົດຂ່າວແບບທົ່ວໄປ ແລະ ສິ່ງໃຫ້ຄະນະບັນນາທິການຊ່ວຍກວດແກ້ ຫຼື ປັບປຸງ. ແຕ່ພາຍຫຼັງການເຂົ້າຮ່ວມຝຶກອົບຮົມ ຕົນເອງກໍ່ໄດ້ມີການພັດທະນາຫຼາຍຂຶ້ນ ແລະ ໃນປັດຈຸບັນນີ້ ຂ້າພະເຈົ້າກໍ່ມີຄວາມສາມາດເຮັດໄດ້ຫຼາຍໜ້າວຽກເຊັ່ນ ໄດ້ຖືກມອບໝາຍໃຫ້ເປັນຜູ້ຈັດການຂອງເພຈ ສື່ສັງຄົມອອນລາຍຂອງອົງກອນ ແລະ ໄດ້ຊ່ວຍກວດແກ້ບົດຂ່າວໃຫ້ໝູ່ເພື່ອນ.

ໃນໄລຍະເວລາ 5 ມື້ ທີ່ເຂົ້າຮ່ວມຝຶກອົບຮົມນຳ ໂຄງການ GAMCIL, ແສງອາທິດ ໄດ້ຮຽນຮູ້ເຕັກນິກທີ່ສຳຄັນຫຼາຍຢ່າງເຊັ່ນ ວິທີການໄຈແຍກຂ່າວແທ້ ແລະ ຂ່າວປອມ, ວິທີວິເຄາະຂໍ້ມູນທີ່ມີຄວາມໜ້າເຊື່ອຖື ແລະ ວິທີການນຳສະເໜີຂ່າວບັນຫາສິ່ງແວດລ້ອມໃຫ້ມີຄວາມໜ້າສົນໃຈ ແລະ ເຂົ້າໃຈງ່າຍ. ທ່ານ ແສງອາທິດ ກ່າວອີກວ່າ *“ຂ້າພະເຈົ້າໄດ້ຮຽນຮູ້ເຕັກນິກການວິເຄາະຂໍ້ມູນ, ໄດ້ເຂົ້າໃຈກ່ຽວກັບຜົນກະທົບຂອງການປ່ຽນແປງດິນຟ້າອາກາດທີ່ມີຕໍ່ສິ່ງແວດລ້ອມ ແລະ ເຕັກນິກການປະເມີນຜົນກະທົບທັງໃນໄລຍະສັ້ນ ແລະ ໄລຍະຍາວຂອງການປ່ຽນແປງຂອງສະພາບແວດລ້ອມ.”*

ໂຄງການສ້າງຄວາມເຂັ້ມແຂງໃຫ້ແກ່ສື່ມວນຊົນ ໂດຍການມີສ່ວນຮ່ວມຂອງອົງການຈັດຕັ້ງມະຫາຊົນ ແລະ ອົງການຈັດຕັ້ງທາງສັງຄົມ ເພື່ອການພັດທະນາສິ່ງແວດລ້ອມ ໃນ ສປປ ລາວ

ຜ່ານມາ ທ່ານ ແສງອາທິດ ຍັງບໍ່ເຄີຍນຳສະເໜີຂ່າວກ່ຽວກັບບັນຫາສິ່ງແວດລ້ອມໂດຍກົງ, ແຕ່ການຂ້າຮ່ວມຝຶກອົບຮົມຄັ້ງນີ້ເຮັດໃຫ້ລາວໄດ້ຮຽນຮູ້ເຕັກນິກໃນການລາຍງານຂ່າວກ່ຽວກັບບັນຫາສິ່ງແວດລ້ອມ ໂດຍນຳໃຊ້ເຄື່ອງມືແບບໃໝ່. ລາວໄດ້ ກ່າວເພີ່ມວ່າ "ຜ່ານມາ ຂ້າພະເຈົ້າໄດ້ນຳສະເໜີແຕ່ຂ່າວກ່ຽວກັບການອະນຸລັກສິ່ງແວດລ້ອມ ເຊິ່ງສ່ວນຫຼາຍກໍ່ເນັ້ນໃສ່ນຳສະເໜີ ແຕ່ຜົນກະທົບດ້ານບວກເທົ່ານັ້ນ. ແຕ່ໃນຕອນນີ້, ຂ້າພະເຈົ້າມີຄວາມໝັ້ນໃຈຫຼາຍຂຶ້ນທີ່ຈະນຳສະເໜີຂ່າວກ່ຽວກັບຜົນກະທົບດ້ານລົບຂອງການກະທຳຂອງມະນຸດຕໍ່ສິ່ງແວດລ້ອມ ໂດຍສະເພາະແມ່ນ ຜົນກະທົບໂດຍກົງຈາກການປ່ຽນແປງຂອງສະພາບດິນຟ້າອາກາດ."

ໜຶ່ງໃນບົດຮຽນສຳຄັນທີ່ ທ່ານແສງອາທິດ ໄດ້ຮັບຈາກການຝຶກອົບຮົມໃນຄັ້ງນີ້ແມ່ນວິທີການຂຽນເນື້ອໃນຂ່າວໃຫ້ໜ້າສົນໃຈ ດຶງຜູ້ອ່ານຜູ້ຊົມ ແລະ ວິທີນຳສະເໜີຫົວຂໍ້ປະເດັນສຳຄັນຕ່າງໆ. ຕໍ່ຈາກນີ້, ທ່ານແສງອາທິດ ມີແຜນທີ່ຈະນຳໃຊ້ຄວາມຮູ້ໃໝ່ໆເຫຼົ່ານີ້ເຂົ້າໃນການສົ່ງເສີມການປົກປັກຮັກສາສິ່ງແວດລ້ອມໂດຍການເຜີຍແຜ່ຂໍ້ມູນຂ່າວສານໃຫ້ແກ່ຊຸມຊົນຂອງຕົນເອງໄດ້ຮັບຮູ້ ໂດຍສະເພາະແມ່ນກຸ່ມຊາວກະສິກອນ. ທ່ານແສງອາທິດ ໄດ້ກ່າວຢ້ຳວ່າ “ຂ້າພະເຈົ້າຢາກເຜີຍແຜ່ຂໍ້ມູນຂ່າວສານໃຫ້ແກ່ຊາວກະສິກອນ ໂດຍສະເພາະແມ່ນຜູ້ທີ່ຍັງດຳເນີນການຖາງປ່າເຮັດໄຮ່. ຂ້າພະເຈົ້າຢາກໃຫ້ພວກເຂົາເຂົ້າໃຈກ່ຽວກັບຜົນກະທົບໄລຍະຍາວຂອງມັນ ໂດຍສະເພາະແມ່ນໄພແຫ້ງແລ້ງທີ່ມັກເກີດຂຶ້ນເລື້ອຍໆ ແລະ ມີການປ່ຽນແປງພຶດຕິກຳຂອງພວກເຂົາ. ອີກຢ່າງໜຶ່ງ, ພວກເຮົາທຸກຄົນຈະຕ້ອງແນະນຳໃຫ້ເຂົາເຈົ້າຫັນປ່ຽນໄປເຮັດອາຊີບອື່ນທີ່ມີຄວາມຍືນຍົງຫຼາຍກວ່າເກົ່າ.”

ທ່ານ ແສງອາທິດ ມີວິໄສທັດສຳລັບອະນາຄົດຂອງຕົນເອງຢ່າງຈະແຈ້ງຄື: ຈະສືບຕໍ່ນຳໃຊ້ອາຊີບສື່ມວນຊົນຂອງຕົນເພື່ອສົ່ງເສີມການປູກຈິດສຳນຶກດ້ານສິ່ງແວດລ້ອມ ແລະ ການເຮັດອາຊີບແບບຍືນຍົງ. ລາວເຊື່ອໝັ້ນວ່າການເຜີຍແຜ່ຂໍ້ມູນທີ່ລາວໄດ້ຮຽນຮູ້ຈາກການຝຶກອົບຮົມຄັ້ງນີ້ ຈະສາມາດຊ່ວຍປ່ຽນແປງທັດສະນະຄະຕິຂອງຊຸມຊົນໄດ້ ແລະ ມີປ່ຽນແປງດ້ານບວກເກີດຂຶ້ນໃນຊຸມຊົນຂອງລາວ.

ທ່ານ ແສງອາທິດ ໄດ້ສະແດງຄວາມຂອບໃຈຕໍ່ການຈັດຝຶກອົບຮົມວ່າ “ຂ້າພະເຈົ້າຂອບໃຈ ໂຄງການ GAMCIL ທີ່ໄດ້ໃຫ້ໂອກາດເຂົ້າຮ່ວມການຝຶກອົບຮົມຄັ້ງນີ້. ຂ້າພະເຈົ້າໄດ້ຮຽນຮູ້ເຕັກນິກໃຫມ່ຫຼາຍຢ່າງສຳລັບການລາຍງານຂ່າວກ່ຽວກັບບັນຫາສິ່ງແວດລ້ອມ ແລະ ບັນຫາສີຂຽວ ແລະ ມີຄວາມຕັ້ນເຕັ້ນຍິນດີຈະທີ່ຈະນຳໃຊ້ບົດຮຽນເຫຼົ່ານີ້ເຂົ້າໃນວຽກງານສື່ມວນຊົນຂອງຕົນ. ຂ້າພະເຈົ້າຈະສືບຕໍ່ພັດທະນາເຕັກນິກການລາຍງານຂ່າວຂອງຕົນເອງ ແລະ ນຳໃຊ້ເພື່ອປະກອບສ່ວນເຂົ້າໃນການພັດທະນາສັງຄົມໃຫ້ດີຂຶ້ນ.”

ໂຄງການ GAMCIL ບໍ່ພຽງແຕ່ໄດ້ມອບໂອກາດໃຫ້ ທ່ານແສງອາທິດ ຮຽນຮູ້ກ່ຽວກັບເຕັກນິກການລາຍງານຂ່າວບັນຫາສິ່ງແວດລ້ອມເທົ່ານັ້ນ ແຕ່ຍັງໄດ້ຊ່ວຍກະຕຸ້ນໃຫ້ລາວຢາກເປັນເຈົ້າການໃນການສົ່ງເສີມການປ່ຽນແປງພຶດຕິກຳໃນຊຸມຊົນຂອງຕົນ ກໍ່ຄືການນຳໃຊ້ບົດບາດສື່ມວນຊົນຂອງຕົນເອງສົ່ງເສີມການສ້າງອະນາຄົດທີ່ຍືນຍົງໃຫ້ແກ່ປະເທດລາວດ້ວຍຄວາມກະຕືລືລົ້ນ.